# ບົດທີ 21

# ການຕັດສິນດ້ານສາດສະໜາແລະດ້ານຫຼວງ




**1** ກ. ໃນວັນພະຫັດຕອນແລງພະເຢຊູອອກຈາກບ້ານເບດທາເນຍ ຄືຕົວອັກສອນໃດ? _______

ຂ. ເພື່ອຈະກິນເທດສະການໃດກັບພວກສາວົກ? ________________________________

ຄ. ຈະກິນໃນບ່ອນໃດ? _____________________________ ຕົວອັກສອນໃດ? _______

ງ. ເຂົາກິນເທດສະການໃຫ້ແລ້ວກ່ອນທ່ຽງຄືນໃນວັນນັ້ນຄືວັນໃດ? _________________

ຈ. ພະເຢຊູອອກຈາກກຸງອີກແລ້ວຂ້າມຫ້ວຍໃດ? ________________________________

ສ. ເຂົາເຂົ້າສວນໃດ? ______________________________ ຕົວອັກສອນໃດ? _______

ຊ. ຫຼັງຈາກກາງຄືນຜູ້ທີ່ຕິດຕາມປະໂລຫິດມາຈັບພະອົງເຂົາຈັບພະອົງວັນໃດ? __________

ຍ. ມັດທາຍ 26:57 ບອກວ່າເຂົາຈັບພະເຢຊູເອົາໄປຫາໃຜ? ______________________

ຕົວອັກສອນໃດ? ____________________________________________________

ຝຶກ: ໃນແຜນທີ່ໜ້າປົກບົດນີ້ໃຫ້ທ່ານເອົາສໍສີຟ້າຂີດຕາມເສັ້ນທີ່ພະເຢຊູເດີນໃນວັນພະຫັດ

ຄື: ຈາກ “ທ” ຜ່ານ “ຍ” ເຖິງ “ຕ”.

ແລ້ວເອົາສໍສີແດງຂີດຕາມທາງທີ່ພະອົງເດີນໄປໃນວັນສຸກ

ຄື: ຈາກ “ຕ” ຜ່ານ “ຊ” “ດ” “ສ” ກັບມາຫາ “ດ” ອີກແລ້ວໃຫ້ສິ້ນສຸດກັບ “ນ”

*ຕໍ່ໄປນີ້ເຮົາຈະຮຽນເລື່ອງເຫດການທີ່ເກີດໃນວັນສຸກ ຄືພະເຍຊູຖືກການຕັດສິນຕໍ່ໜ້າສານສູງສຸດ*

## ວັນສຸກ

**2** ໃນບົດກ່ອນໆ ທ່ານໄດ້ຮຽນເລື່ອງສະພາໃຫຍ່ໃນສາດສະໜາຢິວຄືສານໃດ? (ເລືອກ)

ກ. ສະພາຜູ້ແທນ ຂ. ສານສູງສຸດ ຄ. ທີ່ປະຊຸມຜູ້ປຶກສາ

**3** ໃນສານນັ້ນມີສອງພວກຄື ພວກຟາລິຊາຍ ແລະຊາດູກາຍ.

ກ. ແມ່ນພວກໃດທີ່ມີອຳນາດຫຼາຍ? ______________________________

ຂ. ພວກນັ້ນປະກອບໂດຍຄົນຕຳແໜ່ງໃດເປັນຕົ້ນ? (ເລືອກ)

______ ກະສັດ ______ ປະໂລຫິດ ______ ຜູ້ທຳນວາຍ

**4** ກ. ພວກທີ່ກ່ຽວຂ້ອງກັບເຈົ້ານາຍຈັກກະພັດໂລມຄືພວກໃດ? ______________________

ຂ. ພວກໂລມນັ້ນ ເປັນຜູ້ທີ່ແຕ່ງຕັ້ງມະຫາປະໂລຫິດໄວ້ ດັ່ງນັ້ນມະຫາປະໂລຫິດຈະຂຶ້ນກັບພວກໃດຢູ່ສະເໝີ? ______________________________

**5** ສານສູງສຸດປະກອບໂດຍແຕ່ຜູ້ທີ່ມີອຳນາດຫຼາຍໃນສາດສະໜາຢິວ. ດັ່ງນັ້ນ ທີ່ພະເຍຊູຖືກຕັດສິນຕໍ່ໜ້າສານສູງສຸດສະ ແດງວ່າຖືກການຕັດສິນຢ່າງໃດ? (ເລືອກ)

ກ. ຕາມກົດໝາຍຂອງລັດ ຂ. ຕາມກົດໝາຍສາດສະໜາ

ຄ. ໂດຍເຈົ້າໜ້າທີ່ໂລມ ງ. ໂດຍເຈົ້າໜ້າທີ່ຊາດຢິວ

**6** ຕາມໃນມັດທາຍ 27:1-2 ພະເຍຊູອອກຈາກສານສູງສຸດແລ້ວໄປຫາໃຜ? ____________

**7** ທ່ານຮຽນຮູ້ກ່ອນແລ້ວວ່າປີລາດຂຶ້ນຕຳແໜ່ງແທນອາເຄລາວ ປົກຄອງໃນສາມປີທີ່ພະເຍຊູໄປປ່າວປະກາດ.

ກ. ປີລາດປົກຄອງສອງແຂວງໃດ? ______________________________

ຂ. ກຸງເຢລູຊາເລັມຢູ່ໃນແຂວງໃດ? ______________________________

**8** ກ. ພະເຍຊູເຂົ້າຕໍ່ໜ້າສານຕ່າງໆ ຈັກເທື່ອ? ______________________________

ຂ. ຖືກການຕັດສິນຈາກສອງຊາດໃດ? ______________________________

| |
|---|
| ຝຶກ: ໃຫ້ທ່ານເປີດພະຄຳພີໃໝ່ໜ້າ 96. ໃຫ້ຂຽນຄຳວ່າ "ຕັດສິນດ້ານສາດສະໜາ" ໃນຂອບເຈ້ຍກ່ອນ ມັດທາຍ 26:57. ແລ້ວເປີດໜ້າ 98 ໃຫ້ຂຽນຄຳ "ຕັດສິນດ້ານຫຼວງ" ໃສ່ຂອບເຈ້ຍກ່ອນ ມທ 27:1 |

**9** ຕາມທຳມະດາການຕັດສິນຂຶ້ນສານຈະມີແຕ່ເທື່ອດຽວ ແຕ່ປະເທດປາແລັດສະຕິນສະໄໝນັ້ນມີບັນຫາທາງດ້ານການ ເມືອງທີ່ຜິດປົກກະຕິ.

ກ. ແມ່ນຈັກກະພັດໃດທີ່ຄຸ້ມຄອງແຂວງຢູດາໃນສະໄໝນັ້ນ? ______________________

ຂ. ແມ່ນໃຜເປັນເຈົ້າແຂວງຢູດາແລະຊາມາເລຍ? ____________________________

**10** ຈັກກະພັດໂລມຄຸ້ມຄອງຫຼາຍປະເທດ ແຕ່ເຂົາມີນະໂຍບາຍທີ່ຈະປ່ອຍໃຫ້ເຈົ້າໜາທີ່ໃນແຕ່ລະປະເທດປົກຄອງໃນ ດ້ານແຫ່ງທ້ອງຖິ່ນ. ດັ່ງນັ້ນໃນປະເທດປາແລັດສະຕິນເຂົາມອບສິດປົກຄອງດ້ານສາດສະໜາໃຫ້ສານສູງສຸດ. ແຕ່ຖ້າ ເປັນເລື່ອງໃຫຍ່ຄືການປະຫານຊີວິດຜູ້ທີ່ທຳຜິດ ສິດນັ້ນຂຶ້ນຢູ່ກັບຈັກກະພັດໂລມ. ສານສູງສຸດຂອງຊາດຢິວມີສິດຕັດສິນແຕ່ການປະຫານຊີວິດຢູ່ກັບເຈົ້າແຂວງ. ໃນເນື້ອຄວາມຕໍ່ໄປນີ້ໃຫ້ທ່ານໝາຍ √ ໃສ່ຂໍ້ຄວາມທີ່ຖືກ

ກ._____ ການປົກຄອງໃນທຸກດ້ານຂຶ້ນຢູ່ກັບຈັກກະພັດໂລມ

ຂ._____ ໃນສະໄໝປາແລັດສະຕິນເປັນຫົວເມືອງຂຶ້ນຂອງຈັກກະພັດໂລມ ສານສູງສຸດຂອງສາດສະໜາຢິວມີ ສິດຕັດສິນໃນເລື່ອງສາດສະໜາຍົກເວັ້ນຈາກການປະຫານຊີວິດ.

ຄ._____ ເຈົ້າແຂວງຄົນໂລມຕ້ອງກວດເບິ່ງຄຳຕັດສິນຂອງສານສູງສຸດທຸກປະການ.

ງ. _____ ເຈົ້າແຂວງໂລມຕ້ອງກວດເບິ່ງຄຳຕັດສິນຂອງສານສູງສຸດໃນທຸກເທື່ອທີ່ຈະປະຫານຊີວິດຄົນທີ່ເຮັດຜິດ.

ຈ._____ ພະເຢຊູຖືກຕັດສິນດ້ານສາດສະໜາກ່ອນ.

ສ._____ ພະເຢຊູຖືກຕັດສິນຈາກຫຼວງ.

*ການຕັດສິນຕໍ່ໜ້າສານສູງສຸດແລະການຕັດສິນຕໍ່ໜ້າເຈົ້າແຂວງທັງສອງເກີດຂຶ້ນໃນວັນສຸກຄືວັນດຽວທີ່ພະອົງຕາຍ.*

## ການຕັດສິນໃນດ້ານສາດສະໜາ

**11** ກ. ຫົວໜ້າສານໃນການພິພາກສາດ້ານສາດສະໜາຊື່ຫຍັງ? (ເບິ່ງມັດທາຍ 26:57) _____

ຂ. ເພິ່ນມີຕຳແໜ່ງໃດ? ____________________________________________

*ບັດນີ້ ເຮົາຈະປຽບທຽບກັບຄຳບັນທຶກຂອງພະທຳໂຢຮັນ.*

**12** ໂຢຮັນບັນທຶກເຊັ່ນດຽວກັນໃນໂຢຮັນ 18:24 ວ່າຫົວໜ້າສານຄືໃຜ? _______________ ມີຕຳແໜ່ງໃດ? ____________________________________________

**13** ກ. ໃນໂຢຮັນ 18:24 ນັ້ນແມ່ນຜູ້ໃດໃຫ້ພາພະເຢຊູໄປຫາກະປາຟາ? _______________

ຂ. ໂຢຮັນ 18:13 ເຂົາພາພະອົງໄປຫາໃຜກ່ອນ? _________ ຕໍ່ໄປຫາໃຜ? _________

**14** ເຫັນວ່າເຂົາພາພະເຢຊູໄປຫາຜູ້ນຳໃນສາດສະໜາຢິວສອງຄົນ. ຄົນທຳອິດຄືໃຜ? _______ ຄົນທີສອງເດ? ____________________________________________

**15** ກ່ອນທີ່ຈັກກະພັດໂລມບໍ່ໄດ້ຍຶດອຳນາດໃນປາແລັດສະຕິນ ຜູ້ໃດທີ່ຂຶ້ນຕຳແໜ່ງເປັນມະຫາປະໂລຫິດຢູ່ໃນຕຳແໜ່ງນັ້ນ ຈົນຕາຍ. ແຕ່ມີຢູ່ສອງເທື່ອທີ່ເຈົ້າໜ້າທີ່ໂລມບໍ່ພໍໃຈກັບມະຫາປະໂລຫິດ ແລ້ວເຂົາຕັ້ງຜູ້ໃໝ່ຂຶ້ນແທນຜູ້ຢູ່ກ່ອນ. ແຕ່ໃນ ສາຍຕາຂອງຄົນຢິວຜູ້ໃດທີ່ເຄີຍເປັນມະຫາປະໂລຫິດກໍທຳໜ້າທີ່ເປັນມະຫາປະໂລຫິດຈົນເຖິງຕາຍ.

ກ. ກ່ອນຈັກກະພັດໂລມຢຶດອຳນາດໃນປາແລັດສະຕິນ ຜູ້ໃດທີ່ຂຶ້ນຕຳແໜ່ງເປັນມະຫາປະໂລຫິດຈະຢູ່ໃນ ຕຳແໜ່ງນັ້ນເທິງປານໃດ? ________________________________

ຂ. ແມ່ນຈັກກະພັດໃດທີ່ແຕ່ງຕັ້ງມະຫາປະໂລຫິດໃນສະໄໝພະເຢຊູ? ______________

ຄ. ຖ້າຈັກກະພັດໂລມຕັດມະຫາປະໂລຫິດອອກໄປແລ້ວຊາດຢິວທົ່ວໄປຖືວ່າເພິ່ນເລີກບໍ່ເປັນມະຫາປະໂລຫິດຕໍ່ໄປບໍ່? ________________________________________

**16** ອັນນາເຄີຍເປັນມະຫາປະໂລຫິດມາ ຕັ້ງແຕ່ປີ ຄສ 6 ເຖິງປີ ຄສ 15. ແຕ່ໃນສະໄໝ 3 ປີທີ່ພະເຢຊູອອກໄປປ່າວປະ ກາດກາປະຟາມີຕຳແໜ່ງເປັນມະຫາປະໂລຫິດ. ກາປະຟາເປັນລູກເຂີຍຂອງອັນນາດັ່ງນັ້ນ ໃນສາຍຕາຂອງຊາດຢິວ ອັນນາຍັງມີອິດທິພົນຫຼາຍ.

ກ. ອັນນາກັບກາປະຟາ ເປັນຍາດກັນຢ່າງໃດ? ______________________________

______________________________________________________________

ຂ. ໃນປີທີ່ສຳເລັດນັ້ນ ຜູ້ໃດເປັນມະຫາປະໂລຫິດ? ___________________________

ຄ. ແມ່ນພວກໃດແຕ່ງຕັ້ງກາປະຟາໃນຕຳແໜ່ງນັ້ນ? ___________________________

ງ. ອັນນາຍັງກ່ຽວຂ້ອງກັບການເມືອງແລະສາດສະໜາຢິວບໍ່? __________________

ຈ. ເຖິງແມ່ນວ່າພວກໂລມຕັ້ງກາປະຟາເປັນມະຫາປະໂລຫິດກໍຕາມ ແຕ່ໃນສາຍຕາຂອງຊາດຢິວ ມີຜູ້ໃດອີກທີ່ເປັນ ມະຫາປະໂລຫິດດ້ວຍ? ____________________________

ສ. ເປັນຫຍັງເຂົາຈຶ່ງຖືຢ່າງນັ້ນ? __________________________________________

______________________________________________________________

**17** ເຫັນແລ້ວວ່າ ພະເຢຊູຢູ່ຕໍ່ໜ້າສອງຄົນ

ກ. ທັງສອງຄົນນັ້ນມີຕຳແໜ່ງໃດ? ____________________________________

ຂ. ພະອົງຢູ່ຕໍ່ໜ້າຄົນໃດກ່ອນ? ______________________________________

ຄ. ແລ້ວເທື່ອທີສອງເດ? ____________________________________________

ງ. ພະເຢຊູຖືກຕັດສິນຕໍ່ສານໃດ? ____________________________________

**18** ໃຫ້ອ່ານມັດທາຍ 26:59-60 ເຂົາຫາພະຍານຢ່າງໃດມາເບີກຕໍ່ສູ້ພະອົງ? _____________

**19** ໃຫ້ອ່ານມັດທາຍ 26:61

ກ. ພະຍານຜູ້ໜຶ່ງມາລາຍງານທີ່ພະເຢຊູກ່າວວ່າຈະສາມາດມ້າງຫຍັງ? ______________

ຂ. ໃຫ້ອ່ານໂຢຮັນ 2:18-19. ບໍ່ແມ່ນວ່າພະເຢຊູຈະລົງມືມ້າງພະວິຫານແຕ່ຖ້າຜູ້ໃດຈະມ້າງໄປພະອົງຈະສ້າງຂຶ້ນໃໝ່ ໃນຈັກວັນ? ____________________________________

ຄ. ໃຫ້ອ່ານ ໂຢຮັນ 2:21 ພະເຢຊູບໍ່ໄດ້ກ່າວເຖິງພະວິຫານໃນກຸງເຢລູຊາເລັມ. ພະອົງອ້າງເຖິງຫຍັງ? ____________________________________________________

ງ. ພະເຢຊູບໍ່ໄດ້ບອກວ່າ ພະອົງເອງຈະມ້າງພະວິຫານໃນກຸງເຢລູຊາເລັມທີ່ສ້າງໂດຍຫີນລາຍແລະຄຳ. ພະອົງກ່າວເຖິງ ພະກາຍຂອງພະອົງທີ່ຈະຖືກຂ້າຕາຍ ແລ້ວພະອົງຈະຄືນມາຈາກຕາຍອີກ. ພະຍານເຫຼົ່ານັ້ນເວົ້າຕົວະຫຼືເວົ້າຈິງ? ______________________________

**20** ໃຫ້ອ່ານ ມທ 26:63-66 ເຫດທີ່ເຂົາຢາກຂ້າພະອົງຄື ເຂົາຫາວ່າພະເຢຊູເວົ້າຄວາມໝິ່ນປະໝາດໃຜ? ________________________ ເຂົາບໍ່ຢາກຮັບຟັງວ່າພະເຢຊູເປັນພະເຈົ້າ.

**21** ກ. ໃຫ້ອ່ານ ມທ 26:64 ອີກ. ພະເຢຊູອ້າງເຖິງຕົນເອງວ່າເປັນບຸດໃດ? ______________

ຂ. ຈະສະເດັດມາເທິງຫຍັງ? ________________________________________

ຄ. ຄວາມນັ້ນຖືກກັບຄຳທຳນວາຍໃດໃນພະຄຳພີເດີມ? (ເບິ່ງຂໍ້ອ້າງ) ______________

*ພວກສານສູງສຸດເຂົ້າໃຈວ່າ ຄຳທຳນວາຍນັ້ນອ້າງເຖິງພະເຈົ້າ.*

**22** ກ. ສານສູງສຸດນັ້ນກ່າວໂທດຕໍ່ພະເຢຊູວ່າເພິ່ນໄດ້ອ້າງເຖິງຕົນເອງວ່າເປັນໃຜ? _________

ຂ. ພະເຢຊູຍົກຄວາມຈາກພະຄຳພີເດີມບົດແລະຂໍ້ໃດ? _______________________

**23** ກ. ພະອົງຖືກພິພາກສາດ້ານສາດສະໜາຕໍ່ໜ້າໃຜແດ່? _______________________

ຂ. ພະເຢຊູຖືກພິພາກສານັ້ນ ຕໍ່ໜ້າສະພາໃດ? _____________________________

## ເປໂຕໃນລານຊະວັງຂອງມະຫາປະໂລຫິດ

**24** ໃນເມື່ອພະເຢຊູຢູ່ຕໍ່ໜ້າສານສູງສຸດກໍເກີດມີເລື່ອງກັບທ່ານເປໂຕ. ໃນຂໍ້ພະຄຳພີຕໍ່ໄປນີ້ ໃຫ້ທ່ານໝາຍຂໍ້ໃດທີ່ອ້າງເຖິງ ຄວາມກ້າຫານຂອງເປໂຕ

____ ມທ 26:51

____ ມທ 26:58

____ ມທ 26:69-70

____ ມທ 26:71-72

____ ມທ 26:73-75



**25** ທີ່ເປໂຕຕິດຕາມພະອົງໄປເຖິງລານຊະວັງຂອງມະຫາປະໂລຫິດສະແດງວ່າເພິ່ນບໍ່ຢາກໜີປະພະອົງໄປ ແຕ່ໃນທີ່ສຸດເປ ໂຕຢ້ານຫຼາຍຈົນກວ່າຢູ່ກັບພະອົງບໍ່ໄດ້. ໃຫ້ທ່ານໝາຍເຫດການຕໍ່ໄປນີ້ທີ່ສະແດງເຖິງເປໂຕປະຕິເສດພະອົງ.

ກ.____ ເປໂຕຊັກດາບອອກຟັນຂ້ອຍໃຊ້ຂອງມະຫາປະໂລຫິດ

ຂ.____ ເປໂຕຕິດຕາມພະອົງເຖິງລານຊະວັງຂອງມະຫາປະໂລຫິດ

ຄ.____ ຍິງໃຊ້ຖາມເປໂຕວ່າ ເຄີຍຢູ່ກັບພະເຢຊູບໍ່ ເພິ່ນປະຕິເສດ

ງ. ____ ເຖິງແມ່ນວ່າເພິ່ນປາກສຳນຽງຄາລີເລກໍຕາມ ແຕ່ເປໂຕບໍ່ຍອມຮັບຮູ້

**26** ບັນຫາບໍ່ແມ່ນວ່າເປໂຕຂີ້ຢ້ານແມ່ນແຕ່ເປໂຕໄວ້ໃຈໃນຕົນເອງຫຼາຍເກີນໄປ. ດັ່ງນັ້ນເພິ່ນຈຶ່ງຕົກໃນການທົດລອງ. ເປໂຕຕົກເພາະຫຍັງ? (ເລືອກ)

ກ. ເພິ່ນໄວ້ໃຈກັບຕົນເອງຫຼາຍໂພດ

ຂ. ມີຄົນລັກເອົາດາບໄປ

ຄ. ເພິ່ນປາກສຳນຽງບໍ່ຖືກ

**27** ເປໂຕສະແດງຄວາມກ້າຫານໃນສອງເຫດການໃດ?

______________________________________________________________

______________________________________________________________

**28** ເຖິງແມ່ນວ່າເປໂຕກ້າຫານປານນັ້ນກໍຕາມ ແຕ່ເພິ່ນປະຕິເສດພະອົງເພາະເພິ່ນໄວ້ໃຈຢ່າງໃດ?

______________________________________________________________

**29** ໃຫ້ທ່ານໝາຍ √ ໃສ່ຂໍ້ຄວາມທີ່ປະຕິເສດພະອົງ.

ກ._____ ເຫັນໝູ່ເພື່ອນເວົ້າຄວາມຂັດຂວາງ ສາດສະໜາຄຣິດເຮົາກໍເລີຍແກ້ງເຮັດຄືບໍ່ເປັນຄຣິດສະຕຽນ.

ຂ._____ ເທື່ອໃດທີ່ສົນທະນາກັບໝູ່ ເຮົາມັກແຕ່ວິຈານຜູ້ນໍາຄຣິດສະຕຽນ.

ຄ._____ ເຫັນຄົນທີ່ມັກມາຂໍຄວາມຊ່ວຍເຫຼືອຈາກຄຣິດສະຕຽນເຮົາເລີຍປະຕິເສດວ່າບໍ່ຕ້ອງຊ່ວຍເພາະບໍ່ເປັນຄຣິດສະ ຕຽນ.

ງ. _____ ກ່າວຄໍາພະຍານໃຫ້ເພື່ອນບ້ານຟັງ

ຈ._____ ເຫັນຄົນທີ່ນຸ່ງເຄື່ອງຂາດມາຮ່ວມປະຊຸມ ເຮົາເລີຍບໍ່ຢາກຕ້ອນຮັບເຂົາ.

| |
|---|
| ຈົ່ງຕຽມຕົວໄວ້ເພື່ອປະຊຸມ: ໃຫ້ທ່ານຄິດເຖິງໂອກາດໜຶ່ງໃນອາທິດທີ່ຜ່ານໄປແລ້ວນີ້ ທ່ານໄດ້ປະຕິເສດພະອົງ. ໃຫ້ທ່ານຈົດເລື່ອງນັ້ນໄວ້ແລ້ວຂຽນຊໍ້າອີກ ວິທີທາງທີ່ທ່ານຈະສາມາດຫຼີກເວັ້ນຈາກການປະຕິເສດນັ້ນໄດ້.<br>ໃຫ້ແລກປ່ຽນຄວາມຄິດເຫັນແລະປະສົບປະການກັບຜູ້ອື່ນໃນປະຊຸມ. |

**30** ຫຼັງຈາກການພິພາກສາດ້ານສາດສະໜາຕໍ່ໜ້າສານສູງສຸດ

ກ. ເຂົາເອົາພະເຢຊູໄປຫາໃຜ? __________

ຂ. ເພື່ອການພິພາກສາດ້ານໃດ? _________

ຄ. ເປັນຫຍັງຕ້ອງຕັດສິນເທື່ອທີສອງນີ້? ____

______________________________

______________________________



## ການພິພາກສາຕໍ່ໜ້າເຈົ້າໜ້າທີ່ໂລມ

**31** ໃຫ້ອ່ານ ມທ 27:1-2

ກ. ຕື່ນເຊົ້າແລ້ວເຂົາເອົາພະເຢຊູໄປຫາໃຜ? ____________________

ຂ. ປີລາດມີຕໍາແໜ່ງໃດ? ______________________________

ຄ. ທໍາມະດາເພິ່ນຢູ່ກາຍຊາເລ ເປັນຫຍັງເພິ່ນຈຶ່ງ ໄປກຸງເຢລູຊາເລັມໃນເວລານີ້? ______

______________________________________________________________

ງ. ເພິ່ນພັກໃນຫໍອັນໃດ? ______________________________

ຈ. ເບິ່ງແຜນທີ່ໜ້າປົກບົດນີ້ ຫໍອັນໂຕເນຍໝາຍໄວ້ດ້ວຍຕົວອັກສອນໃດ? ____________

ສ. ປີລາດເອົາໃຜມານຳ? (ມທ 27:19) ______________________________

| |
|---|
| ໃຫ້ທ່ານເປີດແຜນທີ່ໜ້າປົກບົດ 21 ນີ້ອີກ. ໃຫ້ເອົາສໍສີແດງຂີດຕາມເສັ້ນຈາກຕົວອັກສອນ "ຊ" ໄປຫາ "ດ" |

**32** ກ. ໃນການພິພາກສາດ້ານສາດສະໜາ ພະເຍຊູຕ້ອງຢູ່ຕໍ່ໜ້າສອງຄົນໃດ?

______________________ ແລະ ______________________

ຂ. ໃນການພິພາກສາຕໍ່ໜ້າເຈົ້າໜ້າທີ່ຫຼວງ ພະອົງຢູ່ຕໍ່ໜ້າສອງຄົນໃດ?

______________________ ແລະ ______________________

*ບັດນີ້ ເຮົາຈະປຽບທຽບກັບຄຳບັນທຶກຂອງພະທຳລູກາ*

**33** ໃຫ້ອ່ານ ລູກາ 23:6-12.

ກ. ປີລາດສົ່ງພະເຍຊູໄປຫາເຮໂລດເພາະພະເຍຊູມາແຕ່ແຂວງໃດ? ______________

ຂ. ແມ່ນເຮໂລດອົງໃດທີ່ປົກຄອງແຂວງຄາລີເລ? ______________________

ຄ. ໃນລູກາ 23:12 ປີລາດຄືນດີກັບໃຜໃນເວລານັ້ນ? ____________________

ງ. ແຕ່ກ່ອນ ເຂົາມີຄວາມສຳພັນກັນຢ່າງໃດ? ________________________

ຈ. ເຮໂລດເຫັນພະເຍຊູແລ້ວ ເພິ່ນມີຄວາມຍິນດີຫຼາຍເພາະຫຍັງ? ______________

ສ. ທີ່ເຮໂລດຖາມພະອົງຫຼາຍຂໍ້ ພະອົງຕອບຢ່າງໃດ? ____________________

ຊ. ເຮໂລດກັບພວກທະຫານເຮັດຢ່າງໃດຕໍ່ພະອົງ? ______________________

________________________________________________

ຍ. ເຮໂລດອັນຕິປານັ້ນມາຈາກລາຊະວັງທີ່ພັກໃນເມືອງຕິເບເລຍແຂວງຄາລີເລມາເຖິງເທດສະການປັດສະຄາ ໃນກຸງເຢລູຊາເລັມ. ເພິ່ນພັກລາຊະວັງໃດ? ______________ (ເບິ່ງ ໜ້າປົກບົດທີ 2 ໃນເຫຼັ້ມນີ້)

ດ. ໃຫ້ເບິ່ງແຜນທີ່ໜ້າປົກບົດນີ້ອີກ ລາຊະວັງພວກແມັກຄາບິດໝາຍໄວ້ດ້ວຍຕົວອັກສອນໃດ?

________________________________________________

ຕ. ຫຼັງຈາກນັ້ນເຮໂລດເອົາພະເຍຊູໄປຫາໃຜອີກ? ______________________

**34** ເຫັນແລ້ວວ່າໃນການພິພາກສາຫຼວງນັ້ນ ພະເຍຊູໄປ 3 ບ່ອນ: (ຕື່ມຄວາມ)

ກ. ຕໍ່ໜ້າ __________ ຢູ່ທີ່ຫໍອັນໂຕເນຍ

ຂ. ຕໍ່ໜ້າ __________ ຢູ່ໃນລາຊະວັງ ______________________

ຄ. ຕໍ່ໜ້າ __________ ອີກໃນຫໍ ______________________

| |
|---|
| ໃຫ້ທ່ານເອົາສໍສີແດງຂີດເສັ້ນທີ່ພະອົງອອກຈາກຫໍອັນໂຕເນຍ ໄປເຖິງລາຊະວັງພວກແມັກຄາບິດ. (ຈາກຕົວ ດ ໄປຫາຕົວ ສ ແລ້ວກັບໄປຫາຕົວ ດ ອີກ.) |

**35** ເຈົ້າແຂວງໂລມນັ້ນ ຈຳເປັນຕ້ອງເປັນຫ່ວງກ່ຽວກັບຄົນທີ່ຢາກຕັ້ງຕົວຂຶ້ນເປັນກະສັດ ເພາະຢ້ານວ່າເຂົາຈະນຳປະຊາຊົນ ໄປກະບົດຕໍ່ສູ້ຈັກກະພັດໂລມ.

ກ. ໃນ ມທ 27:11 ປີລາດຖາມພະເຢຊູຢ່າງໃດ? ______________________________

ຂ. ໃນ ມທ 27:29 ພວກທະຫານໂລມເຢາະເຍີ້ຍຫົວລໍ້ພະອົງໂດຍກ່າວຄຳໃດ?

______________________________________________________________

| ໃຫ້ທ່ານຂີດເສັ້ນແດງກ້ອງຄຳ "ກະສັດ" ໃນ ມທ 27:11 ແລະ ມທ 27:29 |
|---|

**36** ກ. ໃນການພິພາກສາດ້ານສາດສະໜາເຂົາກ່າວໂທດພະເຢຊູເພາະພະອົງອ້າງວ່າຢ່າງໃດ?

______________________________________________________________

ຂ. ໃນການພິພາກສາດ້ານຫຼວງ ເຂົາກ່າວໂທດພະເຢຊູເພາະພະອົງອ້າງວ່າມີຕຳແໜ່ງໃດ?

______________________________________________________________

*ຈາກນີ້ຕໍ່ໄປເຮົາຈະຍົກເລື່ອງຈາກພະທຳໂຢຮັນມາປຽບທຽບກັນ*

| ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳຕໍ່ໄປນີ້: | | |
|---|---|---|
| ຄຳວ່າ "ລາຊະອຳນາດ" | ໃນ ຢຮ | 18:36 |
| ຄຳວ່າ "ກະສັດ" | ໃນ ຢຮ | 18:33 18:37 18:39 19:3 |
| | | 19:14 19:15 19:19 19:21 |
| ຄຳວ່າ "ພວງມາໄລ" | ໃນ ຢຮ | 19:5 |

**37** ໃຫ້ອ່ານ ໂຢຮັນ 18:36-38

ກ. ຖ້າລາຊະອຳນາດຂອງພະອົງເປັນແຕ່ໂລກນີ້ ຜູ້ຮັບໃຊ້ຂອງພະອົງຈະເຮັດຢ່າງໃດ? ____

ຂ. ທຸກຄົນທີ່ຟັງສຽງຂອງພະອົງຢູ່ຝ່າຍໃດ? ______________________________

**38** ໃຫ້ອ່ານ ໂຢຮັນ 18:39-40 ເຂົາມີທຳນຽມຢ່າງໃດໃນເທດສະການປັດສະຄາ? _________

**39** ຈັກກະພັດໂລມມີນັກໂທດຫຼາຍຄົນຂັງໄວ້ໃນຄຸກ. ໃນເທດສະການປັດສະຄານັ້ນ ປີລາດເປີດໂອກາດໃຫ້ປ່ອຍຜູ້ໜຶ່ງ. ຊາດຢິວມີສິດເລືອກລະຫວ່າງຄົນຜູ້ໜຶ່ງທີ່ມີແຕ່ຄວາມຮັກແລະອີກຜູ້ໜຶ່ງທີ່ເຕັມໄປດ້ວຍຄວາມຊົ່ວຊ້າ.

ກ. ໃນ ໂຢຮັນ 18:40 ຄົນທີ່ຊົ່ວຊ້ານັ້ນຊື່ຫຍັງ? ______________________________

ຂ. ເພິ່ນເຮັດຜິດຢ່າງໃດ? (ອ່ານມາລະໂກ 15:7) ______________________________

**40** ຝ່າຍຈັກກະພັດໂລມ ໃຫ້ຊາດຢິວມີສິດທິພິເສດຢ່າງໃດໃນເວລາເທດສະການປັດສະຄາ?

______________________________________________________________

**41** ພວກປະໂລຫິດຊັກຊວນໃຫ້ປະຊາຊົນເລືອກເອົາຄົນໃດ?________________________

**42** ພວກຄົນຢິວຮ້ອງໃຫ້ເຮັດຫຍັງກັບພະອົງ? (ໂຢຮັນ 19:6)________________________



**43** ພວກທະຫານໂລມເອົາຫຍັງມາເຮັດພວງມາໄລສຸບໃສ່ຫົວພະອົງ? (ໂຢຮັນ 19:2-3) _______________

**44** ເຫັນວ່າປີລາດກັບພວກຜູ້ນຳໃນສາດສະໜາຢິວ ບໍ່ເຂົ້າໃຈກັນ. ໃນໂຢຮັນ 19:6 ເຫັນວ່າພະເຢຊູເປັນຢ່າງໃດ?

_______________________________________

_______________________________________

**45** ໃຫ້ອ່ານໂຢຮັນ 19:12-16 ເລື່ອງນີ້ບໍ່ສິ້ນສຸດເທື່ອ.

ກ. ປີລາດຍັງຊອກຫາໂອກາດເຮັດຫຍັງກັບພະອົງ?

_______________________________________

ຂ. ຜູ້ນຳຄົນຢິວຈຶ່ງຫາຄວາມວ່າ ຖ້າຈະປ່ອຍພະອົງກໍບໍ່ເປັນມິດຂອງໃຜ? ____________________

ຄ. ເຂົາວ່າ ຄົນໃດທີ່ຕັ້ງຕົວເປັນກະສັດ ຄົນນັ້ນເປັນສັດຕູໃຜ? ____________________

ງ. ຕໍ່ໄປພວກປະໂລຫິດບອກວ່າ ເຂົາມີແຕ່ກະສັດອົງດຽວຄືໃຜ? ____________________

ຈ. ຜົນສຸດທ້າຍ ປີລາດຍອມມອບພະເຢຊູໃຫ້ເຂົາເຮັດຫຍັງ? ____________________

**46** ໃຫ້ອ່ານໂຢຮັນ 19:19-22.

ກ. ປີລາດໃຫ້ຂຽນຫຍັງໃສ່ປ້າຍຕິດໄວ້ທີ່ໄມ້ກາງແຂນ? ________________________

ຂ. ພວກຢິວຢາກໃຫ້ປ່ຽນຢ່າງໃດ? ________________________________________

ຄ. ປີລາດຕອບວ່າຢ່າງໃດ? ____________________________________________

**47** ໃຫ້ກັບໄປເປີດພະທຳມັດທາຍ ບົດທີ 27 ອີກ.

ກ. ໃນຂໍ້ 19 ເຫັນຜູ້ໃດທີ່ເຊື່ອວ່າພະເຢຊູບໍ່ມີຜິດ? ___________________________

ຂ. ໃນຂໍ້ 24 ເດ? ________________________________________________

| ໃຫ້ທ່ານເອົາສໍສີຟ້າຂີດກ້ອງຄຳ “ບໍ່ມີຜິດ” ໃນຂໍ້ 24 ນັ້ນ |
|---|

**48** ປີລາດເຮັດຫຍັງທີ່ສະແດງວ່າເພິ່ນບໍ່ຢາກເຂົ້າຮ່ວມໃນການຂ້າພະອົງ? ______________

______________________________________________________________

**49** ກ. ທັງປີລາດແລະພັນລະຍາຂອງເພິ່ນເຊື່ອວ່າຢ່າງໃດກ່ຽວກັບພະເຢຊູ? _____________

ຂ. ແຕ່ເຖິງຢ່າງນັ້ນກໍຕາມ ປີລາດຍັງມອບພະເຢຊູໄວ້ເພາະເຫດໃດ? ______________

**50** ຫຼັງຈາກນັ້ນເຂົາເອົາພະເຢຊູຈາກທຳອັນໂຕເນຍໄປເຖິງໂຄລະໂຄທາເພື່ອຈະຂ້າທີ່ໄມ້ກາງແຂນ.ໃຫ້ທ່ານກັບໄປເບິ່ງແຜນ ທີ່ໜ້າປົກບົດນີ້ຢູ່ ໜ້າ 219. ທີ່ເຂົາຂ້າພະເຢຊູໝາຍໄວ້ດ້ວຍຕົວອັກສອນໃດ? ______________________________________________

> ໃຫ້ທ່ານເອົາສໍສີແດງຂີດເສັ້ນທີ່ພະອົງເດີນຈາກທໍອັນໂຕເນຍໄປເຖິງໂຄລະໂຄທາ (ຈາກ ໑ ໄປເຖິງ ນ.)

**51** ກ. ແມ່ນໃນການພິພາກສາຕໍ່ໜ້າເຈົ້າໜ້າທີ່ໂລມຫຼືຕໍ່ໜ້າປະໂລຫິດໃຫຍ່ທີ່ເຂົາກ່າວໂທດພະເຢຊູ. ເພາະພະອົງແຈ້ງວ່າເປັນກະສັດ? ________________________________

ຂ. ທີ່ພະອົງປະກາດວ່າເປັນພະເຈົ້າເດ? ________________________________

**52** ກ. ໃນການພິພາກສາດ້ານສາດສະໜາ ເຂົາຫາຜິດໃສ່ພະອົງເພາະຫຍັງ? ____________

ຂ. ໃນການພິພາກສາດ້ານຫຼວງເດ? ________________________________

ໃຫ້ທ່ານຕຽມຕົວໄວ້ເພື່ອການປະຊຸມເທື່ອໜ້າໂດຍກ່າວເລື່ອງເຫດການດັ່ງຕໍ່ໄປນີ້ຕາມລໍາດັບໃນວັນພະຫັດຕອນແລງ ແລະວັນສຸກຕອນເຊົ້າ:

| | | |
|---|---|---|
| ມທ 26:36-46 | ເຄັດເຊມາເນ | ອັກສອນ ໓ |
| ມທ 26:47-56 | ເຂົາມາຈັບພະອົງ | ໓ |
| ຢຮ 18:12-14 | ຊົງຖືກນໍາໄປຫາອັນນາ | ຊ |
| ມທ 26:57-75 | ພິພາກສາຕໍ່ໜ້າສານສູງສຸດ | ຊ |
| ມທ 27:2-14 | ຕໍ່ໜ້າປີລາດ | ໑ |
| ລກ 23:6-12 | ຢູ່ຕໍ່ໜ້າເຮໂລດອັນຕີປາ | ສ |
| ມທ 27:15-31 | ຊົງຖືກພິພາກສາເຖິງສິ້ນພະຊົນ (6 ໂມງເຊົ້າ) | ໑ |
| ມທ 27:32-56 | ຖືກຄຶງໄວ້ທີ່ໄມ້ກາງແຂນ | ນ |

*ຕໍ່ໄປນີ້ແມ່ນຮູບຂອງກຸງເຢລູຊາເລັມໃນສະໄໝພະເຢຊູ. ໃຫ້ທ່ານຝຶກເພື່ອຊີ້ບອກສະຖານທີ່ຕ່າງໆທີ່ທ່ານຮູ້ມາແຕ່ກ່ອນແລ້ວ.*

*ໃຫ້ເສັງບົດທີ 21!*



**ຄຳຕອບ:**

**1** *ກ. ທ ຈ. ກິດໂລນ ຂ. ປັດສະຄາ ສ. ເຄັດເຊມາເນ; ຕ*
*ຄ. ຫ້ອງຊັ້ນເທິງ; ຍ ຊ. ວັນສຸກ ງ. ວັນພະຫັດ ຍ. ປະໂລຫິດໃຫຍ່; ຊ*

**2** *ຂ ຖືກ*

**3** *ກ. ຊາດູກາຍ ຂ. ປະໂລຫິດ*

**4** *ກ. ຊາດູກາຍ ຂ. ຊາດູກາຍ*

**5** *ຂ ງ ຖືກ*

**6** *ປີລາດ*

**7** *ກ. ຢູດາ ຊາມາເລຍ ຂ. ຢູດາ*

**8** *ກ. 2 ຂ. ຢິວ ແລະ ໂລມ*

**9** *ກ. ຈັກກະພັດໂລມ ຂ. ປີລາດ*

**10** *ຂ ງ ຈ ສ ຖືກ*

**11** *ກ. ກາປະຟາ ຂ. ມະຫາປະໂລຫິດ*

**12** *ກາປະຟາ ມະຫາປະໂລຫິດ*

**13** *ກ. ອັນນາ ຂ. ອັນນາ ກາປະຟາ*

**14** *ອັນນາ ກາປະຟາ*

**15** *ກ. ເຖິງຕາຍ ຂ. ຈັກກະພັດໂລມ*
*ຄ. ບໍ່ (ເຂົາຍັງຖືວ່າເປັນມະຫາປະໂລຫິດຈົນຕາຍ)*

**16** *ກ. ອັນນາເປັນພໍ່ເມຍຂອງກາປະຟາ (ກາປະຟາເປັນລູກເຂີຍຂອງອັນນາ)*
*ຂ. ກາປະຟາ ຄ. ຈັກກະພັດໂລມ ງ. ກ່ງວຢູ່ ຈ. ອັນນາ*
*ສ. ເພາະວ່າຕາມຮີດຄອງຂອງຢິວ ຜູ້ໃດທີ່ເຄີຍເປັນມະຫາປະໂລຫິດ ຈະຢູ່ໃນຕຳແໜ່ງນັ້ນ ຈົນເຖິງຕາຍ.*

**17** *ກ. ມະຫາປະໂລຫິດ ຂ. ອັນນາ ຄ. ກາປະຟາ ງ. ສານສູງສຸດ*

**18** *ພະຍານຕົວະ*

**19** *ກ. ພະວິຫານ ຂ. 3 ວັນ ຄ. ພະກາຍຂອງພະອົງ ງ. ຕົວະ*

**20** *ພະເຈົ້າ*

**21** *ກ. ມະນຸດ ຂ. ເມກ ຄ. ດານີເອນ 7:13*

**22** *ກ. ພະເຈົ້າ ຂ. ດານີເອນ 7:13*

**23** *ກ. ອັນນາ ກາປະຟາ ຂ. ສານສູງສຸດ*

**24** *ມທ 26:51 ແລະ ມທ 26:58*

**25** *ຄ ງ ຖືກ*

**26** *ກ ຖືກ*

**27** *ຟັນຫູຂອງຂ້ອຍໃຊ້ມະຫາປະໂລຫິດ ຕິດຕາມພະອົງໄປລາດຊະວັງຂອງມະຫາປະໂລຫິດ*

**ຄຳຕອບ (ຕໍ່):**

**28** *ໄວ້ໃຈໃນຕົນເອງ*

**29** *ກ ຂ ຄ ຈ ຖືກ*

**30** *ກ. ປີລາດ ຂ. ຫຼວງ ຄ. ເພາະວ່າມີແຕ່ເຈົ້າໜ້າທີ່ໂລມ ທີ່ມີສິດໃສ່ໂທດປະຫານຊີວິດ*

**31** *ກ. ປີລາດ ຂ. ເຈົ້າແຂວງ ຄ. ໄປເທດສະການປັດສະຄາ ງ. ທ່ອັນໂຕເນຍ ຈ. ດ*
*ສ. ພັນລະຍາ*

**32** *ກ. ອັນນາ ແລະ ກາປະຟາ ຂ. ປີລາດ ແລະ ເຮໂລດ*

**33** *ກ. ຄາລີເລ ອັນຕິປາ (ຜູ້ປົກຄອງເມືອງ) ຄ. ເຮໂລດ ງ. ເປັນສັດຕູກັນ*
*ຈ. ຢາກພົບພະອົງແຕ່ເຫິງແລ້ວ ສ. ບໍ່ຕອບຈັກຢ່າງ*
*ຊ. ດູໝິ່ນພະອົງແລະເອົາເສື້ອໂຕງົດງາມມາຫົ່ມໃຫ້ພະອົງ. ຍ. ແມ້ກຄາບົດ*
*ດ. ສ ຕ. ປີລາດ*

**34** *ກ. ປີລາດ ຂ. ເຮໂລດ... ພວກແມ້ກຄາບົດ ຄ. ປີລາດ... ອັນໂຕເນຍ*

**35** *ກ. ເຈົ້າເປັນກະສັດຂອງຊາດຢິວຫຼື?*
*ຂ. "ກະສັດຂອງຊາດຢິວເອີຍ ຈົ່ງຊົງພະຈະເລີນເທີນ"*

**36** *ກ. ພະເຈົ້າ ຂ. ກະສັດ*

**37** *ກ. ຈະຕໍ່ສູ້ ຂ. ຄວາມຈິງ*

**38** *ປ່ອຍຄົນໜຶ່ງ*

**39** *ກ. ບາລາບາ ຂ. ກະບົດ ແລະ ຂ້າຄົນ*

**40** *ມີສິດເລືອກປ່ອຍນັກໂທດຄົນໜຶ່ງ*

**41** *ບາລາບາ*

**42** *ຄຶງໄວ້ທີ່ໄມ້ກາງແຂນ*

**43** *ເຄືອໜາມ*

**44** *ບໍ່ເຫັນຜິດໃນພະອົງ*

**45** *ກ. ຢາກປ່ອຍພະອົງ ຂ. ກາຍຊາ ຄ. ກາຍຊາ ງ. ກາຍຊາ*
*ຈ. ຄຶງໄວ້ທີ່ໄມ້ກາງແຂນ*

**46** *ກ. ເຢຊູໄທນາຊາເລັດກະສັດຂອງຊາດຢິວ*
*ຂ. ຢາກໃຫ້ຂຽນວ່າ "ຄົນນີ້ບອກວ່າເຮົາເປັນກະສັດຂອງຊາດຢິວ"*
*ຄ. ສິ່ງທີ່ເຮົາຂຽນແລ້ວກໍແລ້ວໄປ*

**47** *ກ. ພັນລະຍາຂອງປີລາດ ຂ. ປີລາດເອງ*

**48** *ເອົານ້ຳມາລ້າງມືຕໍ່ໜ້າປະຊາຊົນ*

**49** *ກ. ເຊື່ອວ່າບໍ່ມີຜິດ ຂ. ປະຊາຊົນ*

**50** *ນ*

**51** *ກ. ເຈົ້າໜ້າທີ່ໂລມ ຂ. ປະໂລຫິດໃຫຍ່*

**ຄໍາຕອບ (ຕໍ່):**

***52*** *ກ. ພະເຢຊູບອກວ່າ ຕົນເອງເປັນພະເຈົ້າ* *ຂ. ເພາະເປັນກະສັດ*